# ລາຍງານກ່ຽວກັບການແຈກຢາຍອາຫານຕ່າງໆໃນລາວ
# ພາຍໃຕ້ກົດໝາຍ ພີ.ແອລ - ໔໘໐
# ອົງການຢູເສດປະຈຳພຣະຣາຊອານາຈັກລາວ

ຕລອດເວລາ ໔ ປີທີ່ຜ່ານມານີ້ ສຫະຣັຖໄດ້ຈັດສົ່ງອາຫານຕ່າງໆມາໃຫ້ພຣະຣາຊອານາຈັກລາວພາຍໄຕ້ກົດຫມາຍ ພີ.ແອລ - ໔໘໐ ຄິດເປັນນ້ຳຫນັກ ໒໘.໐໘໘ ແມດຕຣິກໂຕນ. ເຊັ່ນ : ແປ້ງຫມາກສາລີ, ເຂົ້າວິຕາມິນ, ແປ້ງ, ແປ້ງຖົ່ວເຫລືອງປົນເຂົ້າວິຕາມິນ (ດັບບລິວ.ເອັສ.ບີ.), ນົມຖົ່ວເຫລືອງປົນຫມາກສາລີ (ຊີ.ເອັສ.ເອັມ.); ນົມຜົງບໍ່ປົນໄຂມັນ, ນ້ຳມັນພືດ. ອາຫານ ພີ.ແອລ - ໔໘໐ ເຫລົ່ານີ້ໄດ້ຖືກເອົາມາໃຊ້ລ້ຽງພວກອົພຍົບຫລົບໄພແລະປະຊາຊົນອື່ນໆທີ່ຍາກຈົນໃນພຣະຣາຊອານາຈັກລາວ. ຣັຖບາລສຫະ





ຜູ້ສາວໄທດຳເຊື້ອສາຍຊາວເຂົາຂອງລາວກຳລັງຮັບແຈກແປ້ງຫມາກສາລີຕາມໂຄງການ ພີ.ແອລ - ໔໘໐.



ຄອບຄົວຊາວເຂົາຄອບຄົວນື່ງກຳລັງຊິມແປ້ງຫມາກສາລີ ພີ. ແອລ - ໔໘໐ ຊຶ່ງເອົາມາປຸງເປັນອາຫານເຫມືອນກັນກັບໂປເລນຕ້າຂອງອີຕາລີ

ຣັຖເປັນຜູ້ຈັດສົ່ງອາຫານເຫລົ່ານີ້ໃຫ້ພາຍໃຕ້ຣັຖບັນຍັດວ່າດ້ວຍການຊ່ວຍເຫລືອແລະການພັທນາ ການຄ້າດ້ານກະສິກັມສບັບປີ ໑໙໕໔ ຊຶ່ງແກ້ໄຂ ແລ້ວຂອງກົດຫມາຍ ພີ.ແອລ - ໔໘໐ ຫົວຂໍ້ທີ ໒. ຕອນທີ່ ໒໐໑ ຊຶ່ງມີຂໍ້ຄວາມວ່າ :-

"ໃນນາມຂອງປະຊາຊົນແຫ່ງສຫະຣັຖອະເມຣິກາ ທ່ານປະທານາທິບໍດີໄດ້ຮັບມອບອຳນາດ ໃຫ້ທຳການພິຈາຣະນາຂອບເຂດຄວາມຕ້ອງການແລະໃຫ້ຈັດສົ່ງຜລິດຜົລທາງກະເສດເພື່ອບຳບັດຄວາມອຶດຢາກຫລືເພື່ອບັນເທົາທຸກຢ່າງຟ້າວຟັ່ງຫລືເປັນກໍຣະນີ ພິເສດ, ເພື່ອຕໍ່ສູ້ກັບໂຣກຂາດອາຫານໂດຍສເພາະຢ່າງຍ[illegible]ນເດັກ, ເພື່ອສົ່ງເສີມການພັທນາເສຖກິດແລະການພັທນາຊຸມຊົນໃນທິດປະເທດທີ່ກຳລັງພັທນາ ແລະ ເພື່ອເອົາໄປໃຊ້ໃນການດຳເນີນການຕາມໂຄງ ການລ້ຽງອາຫານເດັກກ່ອນວັຍເຂົ້າໂຮງຮຽນ, ໂຄງການລ້ຽງເຂົ້າສວາຍຕາມໂຮງຮຽນໂດຍບໍ່ຕ້ອງຫວັງ ຜົນກຳໄຣແລະໂຄງການລ້ຽງຄົນຍາກຈົນຕ່າງໆໃນຕ່າງປະເທດ."

ການມອບຜລິດຜົນທາງກະເສດພາຍໃຕ້ຫົວຂໍ້ທີ ໒ ດັ່ງກ່າວນີ້ດຳເນີນໄປຕາມຂໍ້ຕົກລົງຣະຫວ່າງ ຣັຖບານ ໂດຍຜ່າຍທາງອົງການອາສາສມັກທີ່ບໍ່ຄ້າກ[illegible]ຣຂອງອະເມຣິກາຫລືຜ່ານທາງອົງການຕ່າງໆທີ່ມີຫລາຍໆປະເທດຮ່ວມມືນຳເປັນຕົ້ນວ່າໂຄງການ ອາຫານແຫ່ງໂລກຂອງອົງການອາຫານແລະກະເສດ ແລະ ອົງການສຫະປະຊາຊາດ. ພຣະຣາຊອານາຈັກລາວ ມີສ່ວນຮ່ວມໃນໂຄງການ ພີ.ແອລ - ໔໘໐ ໂດຍຜ່ານ ສາຍທາງສອງສາຍນີ້ເພື່ອໃຫ້ມີການຈັດສົ່ງເຄື່ອງອຸປ ໂພກ ແລະບໍຣິໂພກຕ່າງໆເຫລົ່ານີ້ພາຍໃຕ້ຫົວຂໍ້ທີ ໒...... ພາຍໃຕ້ຂໍ້ຕົກລົງຣະຫວ່າງຣັຖບານກັບຣັຖບານ ແລະ ໂດຍຜ່ານທາງອົງການອາສາສມັກທີ່ບໍ່ຄ້າກຳໄຣຊຶ່ງກໍໄດ້ແກ່ຫນ່ວຍບັນເທົາທຸກຄາທໍລິກ.

ເມື່ອກ່າວເຖິງປະເພດແລະຈຳນວນຂອງເຄື່ອງອຸປໂພກບໍລິໂພກຕາມຫົວຂໍ້ທີ່ ໒ ຊຶ່ງຈັດສົ່ງໃຫ້ຕາມຂໍ້ຕົກລົງຣະຫວ່າງຣັຖບານກັບຣັຖບານ. ໂຄງການພີ.ແອລ–໔໘໐ ໃນພຣະຣາຊອານາຈັກລາວໄດ້ດຳເນີນມາເປັນສອງຣະຍະ. ຣະຍະທຳອິດຕັ້ງແຕ່ປີ ໑໙໖໖ ຫາປີ ໑໙໖໙ ແລະໂຄງການຂຍາຍຕໍ່ຂອງຣະຍະປະຈຸບັນ. ໃນຣະຫວ່າງເວລາສາມປີຕັ້ງແຕ່ປີ ໑໙໖໖ ຫາປີ ໑໙໖໙ ສຫະຣັຖໄດ້ຈັດສົ່ງເຄື່ອງອຸປໂພກຕາມຫົວຂໍ້ທີ່ ໒ ມາໃຫ້ພຣະຣາຊອານາຈັກລາວຄິດເປັນນ້ຳໜັກ ໑໑.໖໔໐ ແມດຕຣິກໂຕນ : ໄດ້ແກ່ແປ້ງໝາກສາລີ ໘.໒໕໐ ແມດຕຣິກໂຕນ, ນ້ຳມັນພືດ ໕໔໐ ແມດຕຣິກໂຕນ, ແລະເຂົ້າວິຕາມິນ ໕.໐໗໐ ແມດຕຣິກໂຕນ. ອາຫານເຫລົ່ານີ້ໄດ້ເອົາມາແຈກຢາຍໃຫ້ພວກອົພຍົບຫລົບໄພປະມານ ໑໐໐,໐໐໐ ຄົນ ແລະ ພວກທີ່ຖືກນ້ຳຖ້ວມ ໃນປີ ໑໙໖໖ ປະມານ ໖໐,໐໐໐ ຄົນ.

ໃນຕອນປາຍປີ ໑໙໖໙ ຄາວເມື່ອພວກ ອົພຍົບຫລົບໄພໃນພຣະຣາຊອານາຈັກລາວມີຈຳນວນ ຫລາຍກວ່າ ໒໐໐,໐໐໐ ຄົນ, ໂຄງການ ພີ.ແອລ – ໔໘໐ ໄດ້ຖືກຂຍາຍອອກໄປທັງປະເພດແລະຈຳນວນຂອງເຄື່ອງອຸປໂພກບໍລິໂພກພາຍໃຕ້ຫົວຂໍ້ທີ່ ໒. ເມື່ອທຽບກັບອັດຕຣາລາຍສະເລັ່ຽ ໕,໔໐໐ ແມດຕຣິກໂຕນ ຕໍ່ປີສຳຫລັບສາມປີກ່ອນໆ ໂຄງການທີ່ຂຍາຍຕົວອອກໄປນີ້ໄດ້ຈັດສົ່ງເຄື່ອງອຸປໂພກບໍລິໂພກຕາມຫົວຂໍ້ທີ່ສອງຄິດເປັນນ້ຳໜັກ ໘.໔໔໖ ແມດຕຣິກໂຕນ ໃນປີ ໑໙໗໑ ແລະ ໑໑.໘໔໐ ແມດຕຣິກໂຕນ ໃນປີ ໑໙໗໒. ນອກເໜືອໄປຈາກແປ້ງ ແລະນ້ຳມັນພືດແລ້ວ, ໂຄງການນີ້ຍັງຣວມໄປເຖິງນົມຜົງບໍ່ປົນໄຂມັນແລະດັບບລິວ.ເອັສ.ບີ. ແລະ ຊີ.ເອັສ.ເອັມ. ຊຶ່ງມີໂປຣຕີນສູງອີກດ້ວຍ. ອາຫານທີ່ມີໂປຣຕີນສູງເຫລົ່ານີ້ຍັງໄດ້ຖືກເອົາໄປແຈກຢາຍໃຫ້ແກ່ພວກອົພຍົບຫລົບໄພທຸກຄົນເພື່ອເພີ່ມຈຳນວນໂປຣຕີນແລະແຄລໍຣີໃນຮ່າງກາຍອີກດ້ວຍ.



ການຂົນນົມຜົງບໍ່ປົນໄຂມັນລົງທີ່ສາງເຄື່ອງຂອງ ຢູເສດ, ບ້ານຫ້ວຍຊາຍ.

ພນັກງານສາທິດຝ່າຍແມ່ບ້ານການເຮືອນກຳລັງຄວບຄຸມເບິ່ງແຍງການປຸງຂນົມລາວໂດຍໃຊ້ອາຫານ ພີ.ແອລ – ໔໘໐ ນ້ຳນົມ(ຢູ່ທາງຂວາດ້ານລຸ່ມ)ເຮັດຈາກນົມຜົງບໍ່ປົນໄຂມັນ.





(ຮູບເທິງ) ຄົນງານຜູ້ນຶ່ງທີ່ໂຮງງານເຮັດເສັ້ນໝີ່ກຳລັງຍົກເສັ້ນໝີ່ຈາກຫ້ອງຕົດໄປຫ້ອງອົບແຫ້ງ.



(ຮູບກາງ) ເສັ້ນໝີ່ທີ່ເອົາມາແຈກຢາຍໃຫ້ແກ່ພວກອົພຍົບນັ້ນຜລິດຂຶ້ນທີ່ວຽງຈັນພາຍໃຕ້ສັນຍາທີ່ອົງການຢູເສດເຮັດກັບບໍຣິສັດລາວບໍຣິສັດນຶ່ງ.



(ຮູບລຸ່ມ) ເສັ້ນໝີ່ທີ່ຈະເອົາໄປແຈກຢາຍໃຫ້ພວກອົພຍົບໄດ້ຮັບການບັນຈຸໃສ່ຖົງແລະຫຸ້ມທີ່ໂຮງງານເຮັດເສັ້ນໝີ່ທີ່ ວຽງຈັນ.

ຄວາມຕ້ອງການໂປຣຕີນແລະຄາລໍຣີຂອງຮ່າງກາຍນັ້ນຖືຕາມມາຕຖານອາຫານຣະຫວ່າງຊາດ ແລະຍັງຖືຕາມສະພາບຂອງທ້ອງຖິ່ນແລະປະສົບການ ຂອງເຈົ້າໜ້າທີ່ ຝ່າຍແພດຂອງອົງການຢູເສດທີ່ປະຕິບັດງານຢູ່ກັບພວກອົພຍົບອີກດ້ວຍ. ພວກອົພຍົບທີ່ໄດ້ຮັບແຈກຢາຍອາຫານເຕັມຈຳນວນໄດ້ຮັບເຂົ້າສານໝຽວໜັກ ໔໐໐ ກຣາມຕໍ່ຄົນຕໍ່ມື້ ແລະ ໄດ້ຮັບແຈກຢາຍອາຫານຈຸນ ກະປ໋ອງແລະເກືອເປັນຄັ້ງຄາວເພື່ອທີ່ຈະເອົາອາຫານ ຢ່າງອື່ນມາໃຊ້ແທນເຂົ້າກໍໄດ້ວາງແຜນການໄວ້ວ່າຈະເອົາອາຫານຕາມໂຄງການ ພີ.ແອລ - ໔໘໐ ມາແຈກຢາຍໃຫ້ຫລາຍທີ່ສຸດທີ່ຈະຫລາຍໄດ້ ເພື່ອໃຫ້ອາຫານເຫລົ່ານີ້ ໃຫ້ແຄລໍຣີໄດ້ເຖິງ ໔໐% ຂອງອາຫານທັງໝົດຂອງພວກອົພຍົບ. ໃນຂນະນີ້ຫົວ ອາຫານບາງຢ່າງເຊັ່ນ ດັບບລິວ.ເອັສ.ບີ. ແລະ ຊີ.ເອັສ.ເອັມ. ທຳໜ້າທີ່ທົດແທນຄວາມຕ້ອງການດ້ານໂປຣຕີນໄດ້ເຖິງ ໓໐%. ຄວາມຕ້ອງການອາຫານຂັ້ນມາຕຖານເຫລົ່ານີ້ປ່ຽນແປງໄປໃນບັນດາພວກອົພຍົບທີ່ເດືອດຮ້ອນເພາະໂຣກ ຂາດອາຫານ, ພະຍາດແມ່ທ້ອງ ແລະ ໄຂ້ປ່າເຮື້ອຮັງ ຫລື ໃນບັນດາພວກທີ່ທຳງານປະເພດໃຊ້ເຫື່ອແຮງໜັກເກີນໄປ. ພາຍໃຕ້ສະພາບການຕ່າງໆດັ່ງກ່າວນີ້ ເຮົາເອົາອາຫານພີ.ແອລ - ໔໘໐ ມາເສີມອາຫານຫລັກ.

ໃນປີ ໑໙໗໒ ພວກອົພຍົບປະມານ ໒໗໕.໐໐໐ ຄົນຈະໄດ້ຮັບອາຫານ ພີ.ແອລ - ໔໘໐ ເພື່ອເອົາມາໃຊ້ທົດແທນອາຫານອື່ນ. ໃນປະຈຸບັນນີ້ ເຮົາເອົາອາຫານ ພີ.ແອລ - ໔໘໐ ມາໃຊ້ທົດແທນອາຫານປະເພດເຂົ້າຕາມຈຸດຕ່າງໆ ໔໐ ຈຸດໃນທົ່ງວຽງຈັນໃນອັຕຕຣາອາຫານ ພີ.ແອລ - ໔໘໐ ໜັກ ໗ ກິໂລກຣາມ ຕໍ່ເຂົ້າໜັກ ໘ ກິໂລກຣາມຕໍ່ເດືອນ.

ນອກຈາກແປ້ງໝາກສາລີ, ນ້ຳມັນພືດກັບແປ້ງແລ້ວຄົນລາວບໍ່ຮູ້ຈັກອາຫານຕາມຫົວຂໍ້ທີ່ ໒ ຊຶ່ງເອົາມາ

ແຈກຢາຍພາຍໃຕ້ໂຄງການທີ່ຂຍາຍອອກເລີຍ. ອາຫານໃຫມ່ເຫລົ່ານີ້ໄດ້ຖືກເອົາມາຣວມເຂົ້າໃນໂຄງການດ້ວຍເຫດຜົນສອງປະການ ຄື: ອາຫານດັ່ງກ່າວມີຄຸນຄ່າສູງຕໍ່ຮ່າງກາຍ ແລະ ສາມາດໃຊ້ແທນສ່ວນປະກອບຂອງອາຫານທີ່ຄົນທົ່ວໄປລ້ຽງເຄີຍກິນດີຢູ່ແລ້ວໄດ້.

ໄດ້ມີການຜລິດເສັ້ນຫມີ່ຂຶ້ນໃນວຽງຈັນເພື່ອເອົາໄປແຈກຢາຍໃຫ້ແກ່ພວກອົພຍົບພາຍໃຕ້ສັນຍາ ຊຶ່ງອີງການຢູເສດໄດ້ທຳຂຶ້ນກັບບໍຣິສັດລາວແຫ່ງນຶ່ງ. ໃນການຜລິດເສັ້ນຫມີ່ນີ້ໄດ້ໃຊ້ສູດທີ່ໄດ້ຮັບການປັບປຸງໃຫ້ດີຂຶ້ນກ່ວາເກົ່າຊຶ່ງປະກອບດ້ວຍດັບບລິວ.ເອັສ.ບີ. ໑໐%, ນ[illegible]ງບໍ່ປົນໄຂມັນ ໔% ແລະແປ້ງເຂົ້າວິຕາມິນ ໘໔%. ເສັ້ນຫມີ່ທີ່ຜລິດຂຶ້ນນີ້ຈະມີປະຣິມານໂປຣຕີນຄຸນພາບສູງເຖິງ ໑໔% ໃນການຜລິດເສັ້ນຫມີ່ທີ່ໂຮງງານແຫ່ງນີ້ໄດ້ເອົາເກືອ ທີ່ຜລິດໄດ້ໃນແຂວງ ວຽງຈັນ ມາໃຊ້ປະສົມໃນອັຕຣາປີລະ ໑໔໐ ແມດຕຣິກໂຕນ ບໍຣິສັດນີ້ຜລິດເສັ້ນຫມີ່ໄດ້ວັນລະ ໑໐ ແມດຕຣິກໂຕນ ກິຈການຂອງບໍຣິສັດນີ້ກຳລັງຈະໄດ້ຮັບການຂຍາຍອອກໄປເພື່ອໃຫ້ຜລິດໄດ້ວັນລະ ໑໔ ແມດຕຣິກໂຕນ ເພື່ອຕອບສນອງຄວາມຕ້ອງການທີ່ເພີ່ມຂຶ້ນຢູ່ເລື້ອຍໆ.

[illegible]ງການໄດ້ຈັດສົ່ງເສັ້ນຫມີ່ນີ້ໄປໃຫ້ພວກອົພຍົບໂດຍຂົນໃສ່ຣົຖບັນທຸກໄປຫລືເອົາໃສ່ເຄື່ອງບິນໄປຖິ້ມໃຫ້. ຈົນເຖິງປະຈຸບັນນີ້ທາງການໄດ້ແຈກຢາຍເສັ້ນຫມີ່ ໃຫ້ແກ່ພວກອົພຍົບແລ້ວປະມານ ໓.໐໐໐ ແມດຕຣິກໂຕນການແຈກຢາຍນີ້ໄດ້ດຳເນີນໄປໃນອັຕຣາປະມານ ໓໐໐ ແມດຕຣິກໂຕນຕໍ່ເດືອນ.

ນັບຕັ້ງແຕ່ອາຫານ ພີ.ແອລ - ໔໘໐ ຮຸ້ນທຳອິດໄດ້ມາເຖິງພຣະຣາຊອານາຈັກລາວບັນດາເຈົ້າຫນ້າທີ່ຝ່າຍແມ່ບ້ານການເຮືອນຂອງຣັຖບາລລາວໄດ້ປະຕິບັດງານຮ່ວມກັນກັບບັນດາພນັກງານສາທິດດ້ານ ແມ່ບ້ານການເຮືອນໃນການສິດສອນວິທີໃຊ້ສ່ວນປະກອບອາຫານ



ແມ່ຍິງອົພຍົບທີ່ທຳຫນ້າທີ່ຕັດແຜ່ນຜ້າຕາມແບບທີ່ທ່າແຂກກຳລັງໄຂກ່ອງໃສ່ແຜ່ນຜ້າ ພີ.ແອລ - ໔໘໐.

ຜູ້ສາວອົພຍົບໃນຫ້ອງຮຽນການຫຍິບແສ່ວທີ່ບ້ານຫ້ວຍຊາຍກຳລັງຮຽນວິທີຫຍິບໂດຍໃຊ້ຜ້າ ພີ.ແອລ - ໔໘໐.





ຫ້ອງຮຽນວິຊາປຸງອາຫານຊຶ່ງແມ່ຍິງອົພຍົບກຳລັງຮຽນວິທີເອົາອາຫານ ພີ.ແອລ - ໔໘໐ ມາໃຊ້ແທນເຄື່ອງປະກອບອາຫານແບບພື້ນເມືອງ.

ແມ່ຍິງອົພຍົບທີ່ໄດ້ຮັບການຝຶກອົບຮົມມາແລ້ວກ່ຽວກັບການເອົາອາຫານ ພີ.ແອລ - ໔໘໐ ມາໃຊ້ແທນອາຫານພື້ນເມືອງ ກຳລັງສິດສອນແມ່ຍິງຜູ້ອື່ນທີ່ຢູ່ໃນຫມູ່ບ້ານດຽວກັນ.



ເຫລົ່ານີ້ໃນການປຸງອາຫານແບບທີ່ຄົນລາວເຄີຍກິນ ໃນການຝຶກອົບຮົມທີ່ວຽງຈັນນີ້ຜູ້ທີ່ເຂົ້າຮັບການຝຶກອົບຮົມປະກອບດ້ວຍພນັກງານສາທິດການແມ່ບ້ານການເຮືອນທີ່ມາຈາກແຂວງຕ່າງໆ ແລະ ພວກແມ່ຍິງອົພຍົບ ຊຶ່ງກັບຄືນໄປຫມູ່ບ້ານຂອງເຂົາເຈົ້າເພື່ອສິດສອນແມ່ຍິງຜູ້ອື່ນຕາມຫມູ່ບ້ານໃຫ້ຮູ້ວິທີປຸງອາຫານຈາກເຄື່ອງປະກອບ ໃຫມ່ໆເຫລົ່ານີ້.

ນັບຕັ້ງແຕ່ປີ ໑໙໖໘ ເປັນຕົ້ນມາທາງການ ໄດ້ເອົາຜ້າແພທີ່ໄດ້ຈາກ ພີ.ແອລ - ໔໘໐ ມາແຈກຢາຍເພື່ອໃຊ້ເປັນເຄື່ອງນຸ່ງຂອງພວກອົພຍົບ. ຕາມຕົວເລກທີ່ໄດ້ຈັດສົ່ງເຄື່ອງຂອງປະເພດນີ້ທັງຫມົດມາ ໃຫ້ເປັນຈຳນວນດັ່ງນີ້ : ຜ້າຝ້າຍ ໕໑໗.໓໖໐ ແມດແລະດ້າຍດິບ ໑໗ ມັດ. ເຄື່ອງນຸ່ງທີ່ເອົາໄປແຈກຢາຍໃຫ້ພວກອົພຍົບນັ້ນໄດ້ຜລິດຂຶ້ນຈາກໂຮງງານສອງແຫ່ງ ໃນພຣະຣາຊອານາຈັກລາວ. ທີ່ບ້ານຫ້ວຍຊາຍ ພວກ ແມ່ຍິງອົພຍົບເຂົ້າຮັບການຝຶກອົບຮົມວິຊາຫຍິບແສ່ວ ພ້ອມກັບຫຍິບແສ່ວເສື້ອຜ້າໃຫ້ຄອບຄົວຂອງເຂົາເຈົ້າ ແລະ ສຳຫລັບແຈກຢາຍໃຫ້ພວກອົພຍົບອື່ນໆພາຍໃຕ້ການຄວບຄຸມເບິ່ງແຍງຂອງເຈົ້າຫນ້າທີ່ແມ່ບ້ານການເຮືອນ ຂອງກະຊວງປະຊາສົງເຄາະ ທີ່ທ່າແຂກ ພວກແມ່ຍິງອົພຍົບພາກັນຕັດຜ້າແລະຫຍິບແສ່ວທີ່ອາຄານຫລັງນຶ່ງພາຍໃນ ບໍຣິເວນຄອມປາວດ໌ ຢູເສດ. ຜ້າແພຊຶ່ງຕັດ ເປັນຕ່ອນໆຕາມແບບເພື່ອເອົາໄປຫຍິບແສ່ວເປັນເສື້ອຜູ້ຊາຍ, ສົ້ງຂາຍາວ, ເສື້ອແມ່ຍິງ ແລະ ຜ້າສິ້ນ ກໍຈະຖືກ ແຈກຢາຍອອກໄປເພື່ອຈ້າງຫຍິບໃຫ້ແກ່ແມ່ຍິງຕາມຫມູ່ບ້ານພວກອົພຍົບ ພວກແມ່ຍິງທີ່ມີສ່ວນຮ່ວມໃນອຸດສາ ຫະກັມຄົວເຮືອນນ້ອຍໆນີ້ສາມາດຫາລາຍໄດ້ເດືອນລະປະມານ ໘.໐໐໐ ກີບ ຊຶ່ງກໍມັກຈະເປັນລາຍໄດ້ແຕ່ພຽງຢ່າງດຽວຂອງຄອບຄົວນັ້ນໆ.

ເຄື່ອງຂອງ ພີ.ແອລ - ໔໘໐ ຕາມຫົວຂໍ້ທີ່ ໒ ນີ້ໄດ້ຖືກສົ່ງຈາກສຫະຣັຖມາທີ່ບາງກອກຊຶ່ງເປັນທ່າເຮືອທາງທະເລສຳຫລັບສົ່ງສິນຄ້າມາຍັງພຣະຣາຊອານາຈັກລາວ.  ຈາກບາງກອກສິນຄ້າເຫລົ່ານີ້ຖືກຂົນໃສ່ຣົຖບັນທຸກເປັນຣະຍະທາງ ໔໐໐ ໄມລ໌ ຜ່ານປະເທດໄທ ມາຫນອງຄາຍແລະຕໍ່ຈາກຫນອງຄາຍກໍຂ້າມເຮືອບັກມາທ່ານາແລ້ງ ຊຶ່ງເປັນຄ່າເຮືອເຂົ້າມາພຣະຣາຊອານາຈັກລາວຢູ່ທີ່ແມ່ນ້ຳຂອງໃກ້ວຽງຈັນ.  ການແຈກຢາຍເຄື່ອງຂອງເຫລົ່ານີ້ໄດ້ດຳເນີນໄປພາຍໄຕ້ການຕົກລົງເຫັນີຊອບຮ່ວມກັນຂອງອົງການຢູເສດກັບກະຊວງປະຊາ[illegible]ຄາະຂອງຣັຖບານລາວ.

ອາຫານ ພີ.ແອລ - ໔໘໐ ຣຸ້ນທຳອິດທີ່ສົ່ງມາຍັງພຣະຣາຊອານາຈັກລາວໄດ້ຖືກແຈກຢາຍໂດຍຫນ່ວຍບັນເທົາທຸກຄາທໍລິກ (ຊີ.ອາຣ໌.ເອັສ.) ພາຍໄຕ້ຂໍ້ຕົກລົງສັບບັນນີ້ງທີ່ທຳຂຶ້ນກັບກະຊວງກະສິກັມຂອງສຫະຣັຖ. ກ່ອນປີ ໑໙໖໖ ຊີ.ອາຣ໌.ເອັສ. ທຳຫນ້າທີ່ເປັນ ຜູ້ຮັບອາຫານພີ.ແອລ - ໔໘໐ ຊຶ່ງອົງການຢູເສດເອົາ ມາແຈກຢາຍໃຫ້ແກ່ພວກອົພຍົບ.

ຕລອດຣະຍະເວລາ ໑໕ ປີໃນພຣະຣາຊອານາຈັກລາວ ຫນ່ວຍ ຊີ.ອາຣ໌.ເອັສ. ໄດ້ແຈກຢາຍອາຫານ ພີ.ແອລ - ໔໘໐ ຄິດເປັນນ້ຳຫນັກ ໑໗.໗໗໒ ແມດຕຣິກໂຕນ ໃຫ້ແກ່ໂຮງຮຽນ, ສະຖາບັນ, ໂຮງພຍາບານ, ສະຖານລ້ຽງເດັກກຳພ້າ ແລະ ຄອບຄົວທີ່ຍາກຈົນ.  ເຣີ່ມດ້ວຍການແຈກຢາຍອາຫານດັ່ງກ່າວໃຫ້ແກ່ຄົນພຽງສອງສາມຮ້ອຍຄົນໃນປີ ໑໙໕໗ ດຽວນີ້ຫນ່ວຍ ຊີ.ອາຣ໌.ເອັສ. ແຈກຢາຍເຄື່ອງອຸປໂພກບໍຣິໂພກຕາມຫົວຂໍ້ທີ່ ໒ ປີນຶ່ງຄິດເປັນນ້ຳຫນັກ ໒໐໐ - ແມດຕຣິກໂຕນ ໃຫ້ແກ່ຄົນ ໔໘.໖໐໐ ຄົນ.  ອາຫານເຫລົ່ານີ້ປະກອບດ້ວຍ ເຂົ້າວິຕາມິນ, ເຂົ້າໂອດ ເຮັດເປັນມ້ວນ, ແປ້ງ, ຊີ.ເອັສ.ເອັມ., ດັບບລິວ.ເອັສ



ການແຈກຢາຍອາຫານ ພີ.ແອລ - ໔໘໐ ທີ່ບ້ານຫ້ວຍຊາຍທາງພາກເຫນືອຂອງລາວ.

ເຂົາເຈົ້າກຳລັງຊີມເສັ້ນຫມີ່ທີ່ເຮັດດ້ວຍອາຫານ ພີ. ແອລ - ໔໘໐.



ບີ., ນົມຜົງບໍ່ປົນໄຂມັນ ແລະ ນ້ຳມັນພືດ. ຜູ້ທີ່ ຮັບແຈກຢາຍອາຫານເຫລົ່ານີ້ກ່ອນອື່ນກໍແມ່ນ ແມ່ທີ່ກຳລັງມານລູກ ແລະ ທີ່ກຳລັງມີລູກອ່ອນ, ເດັກນ້ອຍ, ຄົນເຈັບປ່ວຍ ແລະ ຄອບຄົວທີ່ຍາກຈົນ. ໃນການປະຕິບັດງານກັບພວກອົພຍົບຫນ່ວຍ ຊີ.ອາຣ໌.ເອັສ. ແຈກຢາຍອາຫານ ພີ.ແອລ - ໔໘໐ ເພື່ອເອົາມາໃຊ້ກິນ ຕາງເຂົ້າໃຫ້ແກ່ພວກອົພຍົບ ໓໖.໐໐໐ ຄົນໃນທົ່ວວຽງຈັນ.

## ໂຄງການອາຫານ ພີ.ແອລ - ໔໘໐ ພາຍໃຕ້ຫົວຂໍ້ທີ ໒

### ທັນວາ ໑໙໖໖ ຫາ ສິງຫາ ໑໙໗໒

| ອາຫານ | ນ້ຳຫນັກຄິດເປັນ ແມດຕຣິກໂຕນ | ລາຄາຄິດເປັນ ເງິນດອລລ່າ | ລາຄາຄິດເປັນ ເງິນກີບ ກ./ |
|---|---|---|---|
| ແປ້ງຫມາກສາລີ | ໗.໐໐໐ | ໖໗໒.໙໐໐ | ໔໐໗.໑໐໔.໕໐໐ |
| ເຂົ້າວີຕາມິນ | ໒.໐໐໐ | ໑໘໗.໔໐໐ | ໑໑໓.໓໗໗.໐໐໐ |
| ແປ້ງ | ໕.໑໐໐ | ໕໑໘.໘໐໐ | ໓໑໓.໘໗໔.໐໐໐ |
| ດັບບລີວ.ເອັສ.ບີ. | ໑.໖໗໘ | ໓໑໖.໗໐໐ | ໑໙໑.໖໐໓.໕໐໐ |
| ຊີ.ເອັສ.ເອັມ. | ໑.໗໗໘ | ໓໖໓.໑໐໐ | ໒໑໙.໖໗໕.໕໐໐ |
| ນົມຜົງບໍ່ປົນໄຂມັນ | ໑.໓໑໐ | ໑.໐໓໐.໑໕໐ | ໖໒໓.໒໔໐.໗໕໐ |
| ນ້ຳມັນພືດ | ໑.໔໔໐ | ໖໐໙.໒໐໐ | ໓໖໘.໕໖໖.໐໐໐ |
| ຣວມ | ໒໐.໓໐໖ ຂ./ | ໓.໖໙໘.໒໕໐ | ໒.໒໓໗.໔໔໑.໒໕໐ |

ກ./ ໖໐໕ ກີບ = ໑ ດອລລ່າ

ຂ./ ຈາກຈຳນວນທັງໝົດນີ້ ອາຫານຫນັກ ໑໐.໘໙໓ ແມດຕຣິກໂຕນ ໄດ້ມາເຖິງພຣະຣາຊອານາຈັກລາວແລ້ວ ສ່ວນທີ່ເຫລືອອີກ ໙.໔໑໓ ແມດຕຣິກໂຕນ ຈະມາເຖິງໃນເດືອນມິຖຸນາ ໑໙໗໓.

## ຜ້າຝ້າຍ ພີ.ແອລ - ໔໘໐ ພາຍໃຕ້ຫົວຂໍ້ທີ ໒

### ໑໙໖໘ - ໑໙໗໒

| ເຄື່ອງຂອງ | ຈຳນວນ ແມດ | ມັດ | ລາຄາຄິດເປັນ ເງິນດອລລ່າ | ລາຄາຄິດເປັນ ເງິນກີບ ກ./ |
|---|---|---|---|---|
| ຜ້າດ້າຍດິບ | | ໑໗ | ໑.໖໐໐ | ໙໖໘.໐໐໐ |
| ຜ້າສີກະຫລາດຫນາກວ້າງ | ໓໖໐.໐໐໐ | | | |
| ຜ້າມັສລິນ | ໑໗.໙໒໐ | | | |
| ຜ້າດ້າຍດິບ | ໑໔໐.໐໐໐ | — | ໓໒໘.໔໐໐ | ໑໙໘.໖໘໒.໐໐໐ |
| ຣວມ | ໕໑໗.໙໒໐ | ໑໗ | ໓໓໐.໐໐໐ | ໑໙໙.໖໕໐.໐໐໐ |

ກ./ ໖໐໕ ກີບ = ໑ ດອລລ່າ